ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ທະນາຄານແຫ່ງ ສປປ ລາວ

ເລກທີ 1008/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 NOV 2016

# ຂໍ້ຕົກລົງ

## ວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 164/ກຄທ, ລົງວັນທີ 25 ຕຸລາ 2016.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງດັ່ງນີ້:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດລະບຽບການ ແລະ ມາດຕະການກ່ຽວກັບການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ, ຫຼຸດຜ່ອນຄວາມສ່ຽງຂອງທະນາຄານ ແລະ ໃຫ້ເໝາະສົມກັບສະພາບຕົວຈິງ ຂອງການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນປະຈຸບັນ, ແນໃສ່ປະກອບສ່ວນເຂົ້າໃນການປະຕິບັດນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ການຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ.

### ມາດຕາ 2 ການອະທິບາຍຄຳສັບ

ບັນດາຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້:

1. **"ສິນເຊື່ອ"** ໝາຍເຖິງ ເງິນກູ້ (Loan), ເງິນເບີກເກີນບັນຊີ (OD) ແລະ ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ (Advance);

2. "**ຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ**" ໝາຍເຖິງ ຜູ້ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. "**ທະນາຄານ**" ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

**ມາດຕາ 3 ຂອບເຂດໃນການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ**

ທະນາຄານສາມາດສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ໃຫ້ຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ. ນອກຈາກນັ້ນ, ທະນາຄານສາມາດສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ໃຫ້ຜູ້ທີ່ບໍ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ ແຕ່ຕ້ອງການເງິນຕາຕ່າງປະເທດເພື່ອຊຳລະສິນຄ້າທີ່ນຳເຂົ້າໂດຍກົງຈາກຕ່າງປະເທດດັ່ງຕໍ່ໄປນີ້:

- ກົນຈັກ, ພາຫະນະ, ອຸປະກອນ ແລະ ວັດສະດຸ (ລວມທັງແນວພັນພືດ, ແນວພັນສັດ, ປຸຍ ແລະ ຢາປາບສັດຕູພືດ) ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳໂດຍກົງ;
- ກົນຈັກ, ພາຫະນະ, ອຸປະກອນ ແລະ ວັດສະດຸເພື່ອນຳໃຊ້ເຂົ້າໃນການຜະລິດອຸດສາຫະກຳໂດຍກົງ;
- ຢາ ແລະ ອຸປະກອນການແພດເພື່ອນຳໃຊ້ເຂົ້າໃນວຽກງານປິ່ນປົວໂດຍກົງ;
- ນ້ຳມັນເຊື້ອໄຟ ແລະ ອາຍແກັດ.

ທະນາຄານສາມາດອອກໜັງສືສິນເຊື່ອ (L/C) ແລະ ການຄ້ຳປະກັນ (B/G) ເປັນເງິນຕາຕ່າງປະເທດໃຫ້ບັນດາວິສາຫະກິດເພື່ອຮັບໃຊ້ໃຫ້ແກ່ການນຳເຂົ້າສິນຄ້າ ຫຼື ການບໍລິການຕ່າງໆໄດ້ ໂດຍຕ້ອງຮັບປະກັນວ່າວິສາຫະກິດດັ່ງກ່າວ ມີເງິນພຽງພໍໃນການຊຳລະຄ່າສິນຄ້າ ຫຼື ການບໍລິການດັ່ງກ່າວ.

**ມາດຕາ 4 ການບໍລິຫານຄວາມສ່ຽງໃນການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ**

ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະເກີດຈາກການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ, ທະນາຄານຕ້ອງປະຕິບັດດັ່ງນີ້:

1. ມີນະໂຍບາຍ ແລະ ກົນໄກການບໍລິຫານຄວາມສ່ຽງທີ່ລະອຽດ, ຮັດກຸມ ແລະ ສອດຄ່ອງກັບວິທີປະຕິບັດທີ່ດີຂອງສາກົນ ຊຶ່ງຕ້ອງຜ່ານການຮັບຮອງໂດຍສະພາບໍລິຫານຂອງທະນາຄານ ຫຼື ຂອງສຳນັກງານໃຫຍ່ (ກໍລະນີສາຂາທະນາຄານຕ່າງປະເທດ);
2. ເປັນເຈົ້າການໃນການບໍລິຫານຄວາມຕ້ອງການແຫຼ່ງທຶນທີ່ເປັນເງິນຕາຕ່າງປະເທດໃຫ້ເໝາະສົມ ເພື່ອໃຫ້ສອດຄ່ອງກັບແຜນການ ແລະ ຄວາມສາມາດຂອງທະນາຄານໃນການສ້າງລາຍໄດ້ຈາກແຫຼ່ງທຶນດັ່ງກ່າວ;
3. ມີລະບຽບຂັ້ນຕອນລະອຽດ ແລະ ຮັດກຸມໃນການກວດກາແຫຼ່ງລາຍຮັບຂອງຜູ້ກູ້ຢືມ ແລະ ເປົ້າໝາຍການນຳໃຊ້ສິນເຊື່ອຂອງຜູ້ກູ້ຢືມເພື່ອຮັບປະກັນວ່າ (1) ຜູ້ກູ້ຢືມມີແຫຼ່ງລາຍຮັບພຽງພໍເພື່ອຊຳລະໜີ້; ແລະ (2) ການນຳໃຊ້ສິນເຊື່ອ ແລະ ແຫຼ່ງທຶນທີ່ຈະນຳມາຊຳລະໜີ້ແມ່ນສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ;

4. ຮັບປະກັນການປະກອບສຳນວນສິນເຊື່ອໃຫ້ຄົບຖ້ວນ ຕາມລະບຽບການສະໜອງສິນເຊື່ອຂອງທະນາຄານ. ບັນດາເອກະສານປະກອບໃນສຳນວນສິນເຊື່ອຕ້ອງຄົບຖ້ວນ ໃນນັ້ນຕ້ອງມີ: ເອກະສານຢັ້ງຢືນແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ ຫຼື ການເປັນຜູ້ນຳເຂົ້າ, ການນຳໃຊ້ສິນເຊື່ອຕົວຈິງ ແລະ ແຫຼ່ງທຶນທີ່ຈະນຳມາຊຳລະໜີ້ທີ່ເກີດຈາກສິນເຊື່ອຕ້ອງເປັນເອກະສານທີ່ຖືກຕ້ອງ, ເປັນຈິງຕາມລະບຽບກົດໝາຍ ແລະ ຕ້ອງປະກອບເປັນສ່ວນໜຶ່ງຂອງສຳນວນສິນເຊື່ອ ເພື່ອຮັບໃຊ້ໃຫ້ແກ່ການກວດກາຂອງທະນາຄານແຫ່ງ ສປປ ລາວ;
5. ໃນການສະໜອງສິນເຊື່ອໃຫ້ກັບຜູ້ທີ່ບໍ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ ທີ່ສາມາດກູ້ຢືມເປັນເງິນຕາຕ່າງປະເທດຕາມເປົ້າໝາຍທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້, ທະນາຄານຕ້ອງຮັບປະກັນການສະໜອງເງິນຕາຕ່າງປະເທດ ເພື່ອຮັບປະກັນໃຫ້ຜູ້ກູ້ຢືມສາມາດຊຳລະໜີ້ສິນທີ່ເກີດຈາກສິນເຊື່ອດັ່ງກ່າວຢ່າງພຽງພໍ ແລະ ການສະໜອງເງິນຕາດັ່ງກ່າວອາດເຮັດເປັນສັນຍາໜຶ່ງຕ່າງຫາກ ຫຼື ຈະລວມໃນສັນຍາສິນເຊື່ອກໍໄດ້ ແລະ ຕ້ອງປະຕິບັດການລົງບັນຊີສັນຍາດັ່ງກ່າວ ໃຫ້ສອດຄ່ອງກັບລະບຽບການບັນຊີຂອງທະນາຄານແຫ່ງ ສປປ ລາວ;
6. ບໍ່ໃຫ້ເບີກຖອນສິນເຊື່ອເປັນເງິນຕາຕ່າງປະເທດອອກເປັນເງິນສົດ ແຕ່ທະນາຄານຕ້ອງປະຕິບັດການຊຳລະໂດຍກົງເຂົ້າບັນຊີທະນາຄານຂອງຜູ້ຂາຍສິນຄ້າ ຫຼື ບໍລິການ ຕາມການສະເໜີຂອງຜູ້ກູ້ຢືມ ຊຶ່ງທະນາຄານຕ້ອງຮຽກຮ້ອງໃຫ້ຜູ້ກູ້ຢືມສະໜອງບັນດາເອກະສານຫຼັກຖານ ໃບຮຽກເກັບເງິນທີ່ອອກໂດຍຜູ້ຂາຍສິນຄ້າ ຫຼື ບໍລິການດັ່ງກ່າວ ແລະ ຕ້ອງເປັນການຊຳລະເປັນເງິນຕາຕ່າງປະເທດທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ;
7. ກຳນົດໃຫ້ພະນັກງານທີ່ກ່ຽວຂ້ອງຂອງຕົນແຈ້ງ ແລະ ອະທິບາຍໃຫ້ລູກຄ້າທີ່ສົນໃຈກູ້ຢືມເປັນເງິນຕາຕ່າງປະເທດເຂົ້າໃຈກ່ຽວກັບເງື່ອນໄຂການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ.

**ມາດຕາ 5 ລະບອບການລາຍງານ**

ໃຫ້ທະນາຄານລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບເປັນລາຍເດືອນຕາມລະບອບລາຍງານ ແລະ ແບບຟອມທີ່ກົມຄຸ້ມຄອງທະນາຄານທຸລະກິດກຳນົດອອກໃນແຕ່ລະໄລຍະ ບັນດາຂໍ້ມູນແຫຼ່ງທຶນ ແລະ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຊຶ່ງຈຳເປັນໃຫ້ແກ່ການຕິດຕາມ-ກວດກາຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ມາດຕະການຕໍ່ການລະເມີດ**

ທະນາຄານທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຕິດຕາມ-ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້. ບັນດາທະນາຄານມີໜ້າທີ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການສະໜອງເງິນກູ້ເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 792/ທຫລ, ລົງວັນທີ 11 ກັນຍາ 2013 ແລະ ແຈ້ງການເລກທີ 601/ກຄທ ລົງວັນທີ 10 ພະຈິກ 2015 ເລື່ອງມາດຕະການຕໍ່ການລະເມີດຂໍ້ຕົກລົງດັ່ງກ່າວ, ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ເລກທີ 324/ທຫລ, ລົງວັນທີ 19 ເມສາ 2011 ແລະ ລົບລ້າງບັນດາຂໍ້ກຳນົດ ແລະ ລະບຽບການອື່ນທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດອອກຜ່ານມາໃນສ່ວນທີ່ຂັດກັບຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້.

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງໄດ້ພິມເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ຂອງ ສປປ ລາວ 15 (ສິບຫ້າ) ວັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສອນພາວ ໄຟສິດ